ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 1150/ຍທຂ.ສຂ

ສະຫວັນນະເຂດ, ວັນທີ 20 ກຸມພາ 2026

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຄໍາແນະນໍາກ່ຽວກັບການ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງ ທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1491/ສຂ, ລົງວັນທີ 10 ກໍລະກົດ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ;
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 (ບ້ວງປົກະຕິ ໂຄງການປະເພດ I, II, III, IV ມູນຄ່າ 50 ຕື້ກີບຂຶ້ນໄປ) ສະບັບເລກທີ 246/ກງຂ, ລົງວັນທີ 06 ກຸມພາ 2026.
- ອີງຕາມ ຄໍາເຫັນຂອງຄະນະພະແນກ ໂຍທາທິການ ແລະ ຂົນສົ່ງ ຄັ້ງວັນທີ 16 ກຸມພາ 2026.

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ໄດ້ຮັບແຈ້ງການ ຂອງພະແນກການເງິນ ແຂວງ ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 (ບ້ວງປົກະຕິ ໂຄງການປະເພດ I, II, III, IV ມູນຄ່າ 50 ຕື້ກີບຂຶ້ນໄປ) ສະບັບເລກທີ 246/ກງຂ, ລົງວັນທີ 06 ກຸມພາ 2026, ສະນັ້ນ, ຈຶ່ງຂໍຖືເປັນກຽດເຊີນບັນດາທ່ານບໍລິສັດ ທີ່ສົນໃຈ ແລະ ມີຄວາມເໝາະສົມເຂົ້າຮ່ວມການແຂ່ງຂັນປະມູນ ການກໍ່ສ້າງ ແລະ ສ້ອມແປງ ດ້ວຍທຶນຂອງລັດ ປະຈໍາປີ 2026 ຊຶ່ງປະກອບມີທັງໝົດ 26 ໂຄງການ, 05 ແຫຼ່ງທຶນ ໃນນັ້ນ ມີ 20 ໂຄງການ ທີ່ຂັ້ນພະແນກຄຸ້ມຄອງ ດັ່ງນີ້: ທຶນເປົ້າໝາຍສະເພາະ 02 ໂຄງການ, ທຶນສ້ອມແປງເຂົ້າແຫຼ່ງທ່ອງທ່ຽວ 04 ໂຄງການ, ທຶນຟື້ນຟູໄພພິບັດ 04 ໂຄງການ, ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເມືອງນອງ ເມືອງເປົ້າໝາຍພົ້ນທຸກ 07 ໂຄງການ ແລະ ທຶນສ້ອມແປງເຂົ້າແຫຼ່ງທ່ອງທ່ຽວເປົ້າໝາຍທີ 2 ເຊື່ອມຕິດ-ເຊື່ອມຈອດພາກພື້ນ ແລະ ຊຸກຍູ້ການຜະລິດຂອງບັນດາທ້ອງຖິ່ນ (ບ້ວງ 4,000 ຕື້ກີບ) 03 ໂຄງການ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

# ຕາຕະລາງ ແຕ່ລະສັນຍາ ແລະ ຈຸດທີ່ຕັ້ງຂອງໂຄງການ

| ລ/ດ | ເລກທີສັນຍາ | ເລກ ເສັ້ນທາງ | ຊື່ໂຄງການ | ລວງຍາວ | ປະເພດໜ້າວຽກ |
|---|---|---|---|---|---|
| ກ. | ທຶນເປົ້າໝາຍສະເພາະ 02 ໂຄງການ | | | | |
| 1 | VLBL01-2026-RM-DN12-RR-01 | RR-6430<br>RR-6428 | ຄ.ກ ຍົກລະດັບເສັ້ນທາງເລກທີ RR-6430 ແລະ RR-6428 ໜ້າທາງປູດ້ວຍຫີນຂົບປະສົມດິນຈາກບໍ່, ຊ່ວງບ້ານເປັນທາງປູຢາງ 02 ຊັ້ນ ເລີ່ມແຕ່ ເທດສະບານ ເມືອງ ວິລະບູລີ ຫາ ບ້ານກີກາໝາກ ຫາ ບ້ານຫ້ວຍທອງ, ລວງຍາວທັງໝົດ 29 ກມ. | 29 ກິໂລແມັດ | ທາງດິນແດງ |
| 2 | TPT02-2026-RM-DN07-DR-02 | DR-6479 | ຄ.ກ ຟື້ນຟູ ແລະ ສ້ອມແປງ ເສັ້ນທາງເລກທີ DR-6479 ແຕ່ແຍກທາງເລກທີ PR-6313 ເທດສະບານ ເມືອງທ່າປາງທອງ ຫາແຍກທາງເລກທີ RR-6489 ບ້ານໂນນສີສີໄລ, ລວງຍາວ 26 ກມ | 26 ກິໂລແມັດ | ທາງດິນແດງ |
| ຂ | ທຶນສ້ອມແປງເຂົ້າແຫຼ່ງທ່ອງທ່ຽວ 04 ໂຄງການ | | | | |
| 1 | XBL01-2026-RM-DN11-RR-01 | RR-6370 | ຄ.ກ ຟື້ນຟູ ແລະ ສ້ອມແປງທາງປູຢາງ 02 ຊັ້ນເສັ້ນທາງເຊື່ອມຈອດຊາຍແດນແຄມແມ່ນ້ຳຂອງ ທາງເລກທີ RR- 6370 ແຕ່ 3 ແຍກທາງເລກທີ 13 ໃຕ້, ເທດສະບານເມືອງ ຫາ ສາມແຍກທາງເລກທີ RR-6369 ຫາ ບ້ານບາງຄົ້າ, ເມືອງໄຊບູລີ, ແຂວງສະຫວັນນະເຂດ, ລວງຍາວ 5 ກມ. | 5 ກິໂລແມັດ | ທາງປູຢາງ |
| 2 | XPT01-2026-RM-DN14-RR-01 | RR-6344<br>RR-6342 | ຄ.ກ ສ້ອມແປງທາງດິນແດງ ທາງເລກທີ RR-6344 ແຕ່ແຫຼ່ງທ່ອງທ່ຽວພັດທະນາຫາດໄຜ່ນ ແຍກທາງ DR-6316 ບ້ານນາຄຳ ຫາ ບ້ານນາຈີກ ແລະ ທາງເລກທີ RR-6342 ແຕ່ ບ້ານນາຈີກ ຫາ ບ້ານດອນຫວາຍ, ລວງຍາວ 10 ກມ. | 10 ກິໂລແມັດ | ທາງດິນແດງ |
| 3 | KSPH01-2026-RM-DN01-RR-01 | RR-6356 | ຄ.ກ ສ້ອມແປງທາງດິນແດງ ທາງເລກທີ RR-6356 ແຕ່ແຍກທາງຫຼວງແຫ່ງຊາດ ເລກ 9 ບ້ານດົງບັງ ຫາ ທາງຫຼວງແຫ່ງຊາດ ເລກ 11, ບ້ານບຶງທະເລ ນະຄອນໄກສອນ ພົມວິຫານ (ເຊື່ອມຈອດແຫຼ່ງທ່ອງທ່ຽວດົງນາຕາດ ແລະ ຫາດອີງຮັງ) ລວງຍາວ 12 ກມ | 12 ກິໂລແມັດ | ທາງດິນແດງ |
| 4 | KSPH02-2026-RM-DN01-RR-02 | RR-6354 | ຄ.ກ ກໍ່ສ້າງທາງທະລຸ ແລະ ຍົກລະດັບເສັ້ນທາງດິນແດງ ພ້ອມຂົວເບຕົງເສີມເຫຼັກ-ອັດແຮງ ຈຳນວນ 01 ແຫ່ງ, ເຂົ້າແຫຼ່ງທ່ອງທ່ຽວໜອງເຕົ່າ ແລະ ຫາດອີງຮັງ ແຕ່ ບ້ານສີມສະອາດ ຫາ ບ້ານສິ້ງ, ລວງຍາວ 1.0 ກມ ແລະ ຂົວເບຕົງເສີມເຫຼັກ-ອັດແຮງ (ຂາງຂົວສຳເລັດຮູບ) ຮ່ອງອໍ້, ລວງຍາວ 6 ແມັດ, ນະຄອນໄກສອນ | ທາງ 1 ກິໂລແມັດ ຂົວຂາງສຳເລັດຮູບ 6 ແມັດ | ທາງດິນແດງ |
| ຄ | ທຶນຟື້ນຟູໄພພິບັດ 04 ໂຄງການ | | | | |
| 1 | SK01-2026-RM-DN08-PR-01 | PR-6310 | ຄ.ກ ຟື້ນຟູ ແລະ ສ້ອມແປງເສັ້ນທາງ ເລກທີ PR-6310 ແຕ່ທາງເລກທີ 13 ໃຕ້ ບ້ານປາກຊອງ ກມ 10+200 ຄ້າຍທະຫານຊາຍແດນ 326 ຫາ ແຍກທາງເລກທີ 11 E ບ້ານນາໄພ, ລວງຍາວ 18 ກມ, ເມືອງສອງຄອນ. | 18 ກິໂລແມັດ | ທາງດິນແດງ |
| 2 | TPT01-2026-RM-DN07-RR-01 | RR-6483 | ຄ.ກ ຟື້ນຟູ ແລະ ສ້ອມແປງເສັ້ນທາງ ເລກທີ RR-6483 ແຕ່ແຍກທາງເລກທີ PR-6313 ບ້ານຫ້ວຍໝື່ນ ຫາ ອ່າງເກັບນ້ຳ (ເຊສາລະລອງ ເມືອງທ່າປາງທອງ, ລວງຍາວ 10.8 ກມ. | 10.8 ກິໂລແມັດ | ທາງດິນແດງ |
| 3 | N01-2026-RM-DN06-DR-01 | DR-6455 | ຄ.ກ ຟື້ນຟູ ແລະ ສ້ອມແປງທາງດິນແດງ ດ້ວຍການປູແຮ່ ຄວາມໜາ 150 ມມ ທາງເລກທີ DR-6455 ແຕ່ ຂົວເຊລະນອງ (ກມ 5+000) ຫາ ຂົວຈິມບ້ານຄູນສີ (ກມ 11+500) ລວງຍາວ 6.5 ກມ, ເມືອງນອງ. | 6.5 ກິໂລແມັດ | ທາງດິນແດງ |
| 4 | CHP01-2026-RM-DN09-DR-01 | DR-6317 | ຄ.ກ ຟື້ນຟູ ແລະ ສ້ອມແປງທາງດິນແດງ ທາງເລກທີ DR-6317 ແຕ່ບ້ານຕາແຫຼວ ຜ່ານບ້ານຫວດ ຫາ ບ້ານໜອງລຳຈັນ, ລວງຍາວ 15.8 ກມ, ເມືອງຈຳພອນ. | 15.8 ກິໂລແມັດ | ທາງດິນແດງ |
| ງ | ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເມືອງນອງ ເມືອງເປົ້າໝາຍພົ້ນທຸກ 07 ໂຄງການ | | | | |
| 1 | N02-2026-RM-DN06-RR-02 | RR-6452 | ຄ.ກ ກໍ່ສ້າງ ຂົວຈິມຂ້າມເຊລະນອງ ຕາມເສັ້ນທາງເລກທີ RR-6452 ຊ່ວງ (ກມ 4+500) ບ້ານແສນ, ລວງຍາວ 375 ມ, ເມືອງນອງ | 375 ແມັດ | ຂົວຈິມ |
| 2 | N03-2026-RM-DN06-RR-03 | RR-6869 | ຄ.ກ ຍົກລະດັບທາງດິນແດງ ທາງເລກທີ RR-6869 ແຕ່ ຖ້ຳຈະລານ (ກມ 19+500) ຫາ ບ້ານອາລວຍ (ກມ 25+000) ລວງຍາວ 5.50 ກມ, ເມືອງນອງ. | 5.5 ກິໂລແມັດ | ທາງດິນແດງ |
| 3 | N04-2026-RM-DN06-RR-04 | RR-6869 | ຄ.ກ ຍົກລະດັບທາງດິນແດງ ທາງເລກທີ RR-6869 ແຕ່ ບ້ານພູໝາກມີ້ ກມ 7+100 ຫາ ບ້ານລະເບີດ (ກມ 13+500) ລວງຍາວ 6.4 ກມ, ເມືອງນອງ. | 6.4 ກິໂລແມັດ | ທາງດິນແດງ |
| 4 | N05-2026-RM-DN06-RR-05 | RR-6456 | ຄ.ກ ກໍ່ສ້າງຂົວເບຕົງເສີມເຫຼັກ-ອັດແຮງ ຂົວຫ້ວຍປີດ (ກມ 12+500) ຕາມເສັ້ນທາງເລກທີ RR-6456 ແຕ່ ບ້ານຕາມປະໄດ່ຍ ຫາ ບ້ານຕະຫຼຸງ, ລວງຍາວ 12 ມ, ເມືອງນອງ. | 12 ແມັດ | ຂົວເບຕົງເສີມເຫຼັກ |
| 5 | N06-2026-RM-DN06-RR-06 | RR-6456 | ຄ.ກ ກໍ່ສ້າງຂົວເບຕົງເສີມເຫຼັກ-ອັດແຮງ, ຂົວຫ້ວຍກາປາ (ກມ 2+480) ຕາມເສັ້ນທາງເລກທີ RR-6456 ແຕ່ ບ້ານອາລອງ ຫາ ບ້ານປໍ່ ລວງຍາວ 12 ມ, ເມືອງນອງ. | 12 ແມັດ | ຂົວເບຕົງເສີມເຫຼັກ |
| 6 | N07-2026-RM-DN06-RR-07 | RR-6869 | ຄ.ກ ຍົກລະດັບທາງດິນແດງ ທາງເລກທີ RR-6869 ແຕ່ ບ້ານລະປີດ (ກມ 13+500) ຫາ ຖ້ຳຈະລານ, (ກມ 19+500) ລວງຍາວ 6.0 ກິໂລແມັດ, ລວງກ້ວງ 6 ແມັດ, ເມືອງນອງ, ແຂວງສະຫວັນນະເຂດ | 6 ກິໂລແມັດ | ທາງດິນແດງ |
| 7 | N08-2026-RM-DN06-RR-08 | RR-6456 | ໂຄງການ ກໍ່ສ້າງຂົວເບຕົງເສີມເຫຼັກ-ອັດແຮງ, ຂົວຫ້ວຍລຳປັກ (ກມ 10+400) ຕາມເສັ້ນທາງ RR-6456 ແຕ່ ບ້ານອາລາ ຫາ ບ້ານຕາມປະໄຕ່ຍ ລວງຍາວ 12 ແມັດ, ເມືອງນອງ, ແຂວງສະຫວັນນະເຂດ. | 12 ແມັດ | ຂົວເບຕົງເສີມເຫຼັກ |
| ຈ | ທຶນສ້ອມແປງເຂົ້າແຫຼ່ງທ່ອງທ່ຽວເປົ້າໝາຍທີ 2 ເຊື່ອມຕິດ-ເຊື່ອມຈອດພາກພື້ນ ແລະ ຊຸກຍູ້ການຜະລິດຂອງບັນດາທ້ອງຖິ່ນ (ບ້ວງ 4,000 ຕື້ກີບ) 03 | | | | |
| 1 | OTP01-2026-RM-DN02-PR-01 | PR-6312 | ຄ.ກ ສ້ອມແປງ ທາງປູຢາງ 02 ຊັ້ນ ທາງເລກທີ PR-6312 ແຕ່ແຍກທາງເລກ 9 ຫາ ເມືອງອຸທຸມພອນ ຫາ ບ້ານເລົ່າສຸລິຍະ ເມືອງ ຈຳພອນ, ລວງ 15.23 ກມ. | 15.23 ກິໂລແມັດ | ທາງປູຢາງ |
| 2 | PLX01-2026-RM-DN15-RR-01 | RR-6677 | ຄ.ກ ກໍ່ສ້າງຂົວເບຕົງເສີມເຫຼັກ-ອັດແຮງ ຕາມເສັ້ນທາງເລກທີ RR-6677 ຂ້າມນ້ຳເຊຊຳຊອຍ, ລວງຍາວ 100 ແມັດ, ເມືອງພະລານໄຊ | 100 ແມັດ | ຂົວເບຕົງເສີມເຫຼັກ |
| 3 | ASPT01-2026-RM-DN03-PR-01 | PR-6311 | ຄ.ກ ກໍ່ສ້າງຂົວເບຕົງເສີມເຫຼັກ-ອັດແຮງ ຫ້ວຍພະນອມ ຕາມເສັ້ນທາງເລກທີ PR-6311 ຊ່ວງ (ກມ 15+300), ລວງຍາວ 75 ແມັດ, ເມືອງອາດສະພັງທອງ | 75 ແມັດ | ຂົວເບຕົງເສີມເຫຼັກ |

1. ການປະມູນຈະດຳເນີນຕາມຮູບແບບ ແລະ ຂັ້ນຕອນ ການປະມູນເປີດກ້ວາງ (ພາຍໃນ) ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
2. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ກໍ່ສ້າງ, ສ້ອມແປງຂົວທາງ ຖືກຕ້ອງຕາມກົດໝາຍ;
3. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ລຸ່ມນີ້ ໃນໂມງລັດຖະການ: ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ໂທລະສັບ: 020 55199951, E-mail: dpwt.svk@gmail.com;
4. ເອກະສານປະມູນ ສາມາດຊື້ໄດ້ຢູ່ ຂະແໜງຈັດຊື້-ຈັດຈ້າງ, ພະແນກການເງິນແຂວງ ໂທລະສັບ: 020 55656296, ຕາມໂມງລັດຖະການ, ໃນລາຄາ 1,000,000 ກີບ/ຊຸດ (ໜຶ່ງລ້ານກີບ) ໂດຍບໍ່ມີການທົດແທນຄືນ;
5. ເອກະສານປະມູນຕ້ອງສົ່ງເຖິງ ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ກ່ອນເວລາ 9:00 ໂມງ ຂອງວັນທີ 09 ເມສາ (04) 2026 ຢູ່ທີ່ຫ້ອງປະຊຸມເບີ 03 ຊັ້ນ 03 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ, ຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
6. ເອກະສານປະມູນ ຕ້ອງປະກອບໜັງສືຄ້ຳປະກັນການປະມູນມາພ້ອມ ຫຼື ດ້ວຍເງິນສົດ ໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງລາຄາປະມູນ), ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານທີ່ຖືກຕ້ອງກັບແບບຟອມທີ່ໄດ້ກຳນົດໄວ້ຢູ່ ໃນເອກະສານປະມູນ;
7. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງ ຕາມລາຍລະອຽດຂອງແຕ່ລະສັນຍາ ແລະ ກອງປະຊຸມກ່ອນຍື່ນຊອງປະມູນຈະໄດ້ຈັດຂຶ້ນໃນວັນທີ 26 ມີນາ (03) 2026 ຢູ່ທີ່ຫ້ອງປະຊຸມເບີ 3 ຊັ້ນ 3 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ເລີ່ມແຕ່ເວລາ 9:00 ໂມງ ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເພື່ອຊັບຊ້ອນເວລາເຂົ້າຮ່ວມການແຂ່ງຂັນປະມູນຕາມວັນເວລານີ້ດ້ວຍ.

**ຮອງ ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ

**ສຸວັນ ແສງຈຳພອນ**